ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 4198 /ທຄຕລ.2024........
ນະຄອນຫຼວງວຽງຈັນ, ວັນທີ:.13.12.2024......

# 1 ໜັງສືແຈ້ງເຊີນປະມູນ

**ເຖິງ**: ບັນດາບໍລິສັດຜູ້ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ອາຄານ.

**ເລື່ອງ**: ແຈ້ງເຊີນປະມູນລາຄາ ເພື່ອຄັດເລືອກເອົາຜູ້ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ສູນເກັບກຳຂໍ້ມູນ-ຂ່າວສານ ທຄຕລ ໄລຍະທີ II.

ທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນລາຄາໂຄງການ “ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງອາຄານສູນເກັບກຳຂໍ້ມູນ-ຂ່າວສານ ທຄຕລ ໄລຍະທີ II” (BCEL DATA CENTER PHASE II) ໂຄງການຕັ້ງຢູ່ບ້ານໂພນປ່າເປົ້າ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ເຊິ່ງມີລາຍລະອຽດດັ່ງນີ້:

1. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກ້ວາງ ໂດຍອີງໃສ່ໜັງສືຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ: 0477/ກງ. ລົງວັນທີ 13 ກຸມພາ 2019.
2. ການປະມູນແມ່ນຈະດຳເນີນໃນຮູບແບບຂັ້ນຕອນດຽວ 2 ຊອງ (ແຈ້ງປະມູນຄັ້ງດຽວ ເພື່ອຍື່ນຊອງເອກະສານຄຸນວຸດທິ, ມາດຕະຖານເຕັກນິກ ແລະ ຊອງລາຄາໂຄງການ);
3. ບໍລິສັດທີ່ມີຄວາມສົນໃຈ ສາມາດພົວພັນເອົາເອກະສານ ແລະ ລາຍລະອຽດການແຈ້ງເຊີນປະມູນທີ່ຫ້ອງການອຳນວຍການ ທຄຕລ ສຳນັກງານໃຫຍ່ (ຊັ້ນ 5 ຕຶກ C) ເລີ່ມແຕ່ ວັນທີ **13 ທັນວາ 2024** ຈົນຮອດ **ວັນທີ 03 ກຸມພາ 2025** (ມື້ປິດຮັບຊອງປະມູນ) ເວລາ 09:00 – 15:30 ໂມງ, ລາຍລະອຽດຊຸດເອກະສານປະມູນ ປະກອບມີດັ່ງນີ້:
   ກ. ຊຸດເອກະສານປະມູນ 12 ພາກ (12 Sections);
   ຂ. ໃບນຳສົ່ງເອກະສານ ການປະມູນ;
   ຄ. ສັນຍາວ່າດ້ວຍການຫ້າມເປີດເຜີຍຂໍ້ມູນຄວາມລັບ;
4. ບໍລິສັດຕ້ອງຍື່ນຊອງເອກະສານປະມູນ ທີ່ຫ້ອງການອຳນວຍການ ທຄຕລ (ຊັ້ນ 5 ຕຶກ C) ສຳນັກງານໃຫຍ່ ພາຍໃນອາທິດສຸດທ້າຍ ກ່ອນປິດການປະມູນ ຄື **ວັນທີ 27 ມັງກອນ - 03 ກຸມພາ 2025** ປິດຮັບເວລາ: 15:30ໂມງ ແລະ ຈະແຈ້ງຜົນການຄັດເລືອກບໍລິສັດ ບໍ່ເກີນ ວັນທີ **03 ມີນາ 2025**;

5. ບໍລິສັດທີ່ມີຄວາມຕ້ອງການຊື້ຊອງເອກະສານປະມູນ ຕ້ອງເປັນບໍລິສັດລົງທຶນພາຍໃນປະເທດ ມີເອກະສານປະກອບການດຳເນີນທຸລະກິດຖືກຕ້ອງຕາມລະບຽບ ແລະ ກົດໝາຍຂອງ ສປປ ລາວ. ລາຍລະອຽດໄດ້ອະທິບາຍໃນເອກະສານ TOR ດ້ານຄຸນວຸດທິທີ່ບັນຈຸໃນຊອງຊຸດເອກະສານປະມູນ;



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http://www.bcel.com.la E-mail: bcelhqv@bcel.com.la SWIFT Code: COEBLALA

6. ບໍລິສັດຕ້ອງມີຜົນງານ ປະສົບການ "ໃຫ້ບໍລິການກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ອາຄານສູງ ຫຼື ສູນເກັບກຳຂໍ້ມູນ-ຂ່າວສານ ໃນ ສປປ ລາວ ທີ່ໄດ້ມາດຕະຖານ ໃນໄລຍະ 5 ປີຜ່ານມາ ໂດຍບໍລິສັດຕ້ອງນຳເອກະສານສັນຍາ ຫຼື ໜັງສືຮັບຮອງຜົນງານມາສະແດງ;
7. ຖ້າບໍລິສັດໃດທີ່ມີປະສົບການດ້ານການກໍ່ສ້າງ ຕິດຕັ້ງລະບົບ ສຳນັກງານ ອາຄານສູງ ແບບຄົບວົງຈອນຈະພິຈາລະນາເປັນພິເສດ;
8. ບໍລິສັດທີ່ຈະເຂົ້າຮ່ວມປະມູນຕ້ອງເປັນບໍລິສັດທີ່ສາມາດຕົບແຕ່ງເອງ ແລະ ຫ້າມເປັນການປະມູນໃນນາມນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ;
9. ທຄຕລ ຈະສະຫງວນສິດບໍລິສັດ ໃຫ້ສາມາດເຂົ້າຮ່ວມປະມູນລາຄາໄດ້ພຽງພູດອຽກດຽວ (ໃນກໍລະນີຍື່ນເອກະສານເຂົ້າຮ່ວມວຽກງານການ ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ (Utility) ແລ້ວ ແມ່ນຈະບໍ່ສາມາດຍື່ນເອກະສານເຂົ້າຮ່ວມປະມູນວຽກງານໂຄງການໃຫ້ບໍລິການ ແລະ ບຳລຸງຮັກສາ ສູນເກັບກຳຂໍ້ມູນ-ຂ່າວສານ ໄອທີ ທຄຕລ  (Data Hall) ໄດ້ຕື່ມອີກ, ໃນກໍລະນີຝ່າຝືນແມ່ນຈະຖືກຕັດສິດຈາກການປະມູນ.
10. ສອບຖາມລາຍລະອຽດເພີ່ມຕື່ມ ກ່ຽວກັບການປະກອບເອກະສານຕ່າງໆ ກ່ອນການຍື່ນຊອງລະຫວ່າງ ວັນທີ **20 ມັງກອນ 2025** ລົງມາ. ເວລາ 09:00 – 11:30 ໂມງ ແລະ 13:00 – 15:30 ໂມງ ທີ່ໝາຍເລກໂທລະສັບ: (856)20 59 594 236, (856)20 77 467 722, (856) 20 99926663 ຫຼື ທາງ ອີເມວ: datacenter_utility@bcel.com.la. ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດຜູ້ໃຫ້ບໍລິການ ເພື່ອຮັບຊາບ ແລະ ສົນໃຈຍື່ນເອກະສານການປະມູນທີ່ກ່າວໄວ້ຂ້າງເທິງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທະນາຄານ ແຫ່ງ ສປປ ລາວ ນະຄອນ ຫລວງ ວຽງຈັນ

ນ. ສາຍສະໝອນ ຈັນທະຈັກ

ສຳນັກງານໃຫຍ່

ເລກທີ: 4199 /ທຄຕລ. 2024
ນະຄອນຫຼວງວຽງຈັນ, ວັນທີ: 13.12.2024

## 2. ການແນະນຳເງື່ອນໄຂ ບໍລິສັດໃຫ້ບໍລິການ ເຂົ້າຮ່ວມການປະມູນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ມີຈຸດປະສົງຈະຄັດເລືອກເອົາ ບໍລິສັດໃຫ້ບໍລິການ ເຂົ້າຮ່ວມການປະມູນ ໂຄງການ ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ອາຄານ ສູນເກັບກຳຂໍ້ມູນ-ຂ່າວສານ ທຄຕລ (BCEL DATA CENTER PHASE II).

### 1. ຄຸນສົມບັດຂອງບໍລິສັດເຂົ້າຮ່ວມປະມູນ.

1.1. ບໍລິສັດສະເໜີເຂົ້າຮ່ວມປະມູນ ຕ້ອງເປັນ:

1.1.1. ບໍລິສັດຈຳກັດ ຫຼື ບໍລິສັດນິຕິບຸກຄົນ ເປັນບໍລິສັດລົງທຶນພາຍໃນປະເທດ ມີເອກະສານປະກອບການດຳເນີນທຸລະກິດຖືກຕ້ອງຕາມລະບຽບ ແລະ ກົດໝາຍຂອງ ສປປ ລາວ;

1.1.2. ບໍລິສັດຕ້ອງມີຜົນງານ ປະສົບການ "ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ອາຄານສູງ ຫຼື ສູນເກັບກຳຂໍ້ມູນ-ຂ່າວສານ ໃນ ສປປ ລາວ ທີ່ໄດ້ມາດຕະຖານ ໃນໄລຍະ 5 ປີຜ່ານມາ ໂດຍບໍລິສັດສາມາດນຳເອກະສານສັນຍາ ຫຼື ໜັງສືຮັບຮອງຜົນງານມາສະແດງ;

1.1.3. ຖ້າບໍລິສັດໃດທີ່ມີປະສົບການດ້ານການກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ສຳນັກງານ ອາຄານສູງແບບຄົບວົງຈອນຈະພິຈາລະນາເປັນພິເສດ;

1.2. ບໍລິສັດເຂົ້າຮ່ວມການປະມູນ ທີ່ບໍ່ມີຜົນປະໂຫຍດຮ່ວມກັບຜູ້ເຂົ້າຮ່ວມການປະມູນລາຍອື່ນ ທີ່ເຂົ້າຮ່ວມການປະມູນໃນໂຄງການດຽວກັນ ຫຼື ຜູ້ທີ່ບໍ່ກະທຳການອັນເປັນການຂັດຂວາງການແຂ່ງຂັນການປະມູນໃນຄັ້ງນີ້;

1.3. ບໍລິສັດເຂົ້າຮ່ວມການປະມູນ ທີ່ຜ່ານການຄັດເລືອກເປັນຜູ້ມີຄຸນວຸດທິ ຕາມການແຈ້ງການ ຂອງບໍລິສັດທີ່ປຶກສາໂຄງການ ແລະ ເຈົ້າຂອງໂຄງການ (Pre-qualification "PQ");

1.4. ບໍລິສັດເຂົ້າຮ່ວມການປະມູນ ທີ່ມີຄວາມສາມາດນຳແຊັກເງິນສົດ ຫຼື ໜັງສືຄ້ຳປະກັນຈາກທະນາຄານຢູ່ພາຍໃນ ສປປ ລາວ ຈຳນວນ 10% ຂອງມູນຄ່າໂຄງການທີ່ສະເໜີໃນມື້ຍື່ນເອກະສານປະມູນລາຄາ ເພື່ອເປັນມູນຄ່າຄ້ຳປະກັນການປະມູນລາຄາໂຄງການ (Bid Bond);

### 2. ລັກສະນະ ແລະ ຂອບເຂດຂອງໂຄງການ.

ໂຄງການ "ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ອາຄານ" ຂອງອາຄານສູນເກັບກຳຂໍ້ມູນ-ຂ່າວສານ ທຄຕລ ໄລຍະທີ II (BCEL Data Center Phase II) ຊຶ່ງມີທີ່ຕັ້ງໂຄງການຢູ່ ບ້ານໂພນປ່າເປົ້າ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ໄລຍະເວລາກໍ່ສ້າງແມ່ນ 12 ເດືອນ ຫຼື (365 ວັນ) ລວມທັງວັນພັກລັດຖະການ, ເທດສະການ, ວັນສິນນ້ອຍ-ໃຫຍ່ ແລະ ມື້ລ່ວງເວລາຕ່າງໆ ແລ້ວ. ເປັນອາຄານທີ່ມີພື້ນທີ່ໃຊ້ສອຍແມ່ນ 7,452 ມ2 ເປັນເນື້ອທີ່ຂອງອາຄານລວມທັງໝົດ 5 ຊັ້ນ. ໜ້າວຽກຫຼັກຂອງໂຄງການຈະປະກອບມີ:

2.1. ວຽກຮື້ຖອນສິ່ງກໍ່ສ້າງພາຍນອກອາຄານຈາກໂຄງການໄລຍະ I;

2.2. ວຽກທາງເບຕົງ ແລະ ບ່ອນຈອດລົດ;

2.3. ວຽກຖົມດິນ ແລະ ກັນເຈື່ອນ;

2.4. ວຽກຮົ້ວ ແລະ ເຮືອນຍາມ;

2.5. ວຽກງານສະຖາປັດຕະຍະກຳ ແລະ ຕົບແຕ່ງພາຍໃນອາຄານ;

2.6. ວຽກລະບົບນໍ້າ (PLUMBLING).

## 3. ຫຼັກຖານການຍື່ນຊອງເອກະສານປະມູນລາຄາ.

ບໍລິສັດເຂົ້າຮ່ວມການປະມູນລາຄາ ຈະຕ້ອງໄດ້ຍື່ນເອກະສານ, ຫຼັກຖານ, ເອກະສານປະມູນລາຄາ ຈຳນວນ 4 ຊຸດ (ຕົ້ນສະບັບ 1 ແລະ ສຳເນົາ 3 ຊຸດ) ໂດຍຍື່ນເອກະສານປະມູນລາຄາ ພາຍໃນວັນທີ **27 ມັງກອນ - 03 ກຸມພາ 2025** ລະຫວ່າງເວລາ 9:00 ເຖິງ 15:30 ໂມງ ດັ່ງນີ້:

ຍື່ນເອກະສານປະມູນລາຄາ ທີ່ ຫ້ອງການອຳນວຍການ ທຄຕລ ທີ່ສຳນັກງານໃຫຍ່ (ຊັ້ນ 5 ຕຶກ C) ຈຳນວນ 4 ຊຸດ, ໂດຍຕິດຕໍ່:

1) ທ່ານ ນາງ ວຽງແກ້ວ ອິນສີມີໄຊ ເບີໂທຕິດຕໍ່: (856)20 59 594 236.

2) ທ່ານ ເພັດສະໝອນ ແສງຕະກຸນ ເບີໂທຕິດຕໍ່: (856)20 77 467 722.

3) ທ້າວ ຫຼ້າດາວ ພົນອາສາ ເບີໂທຕິດຕໍ່: (856)20 99926663

### 3.1. <u>ຊອງທີ</u> 1: ປະກອບມີລາຍລະອຽດດັ່ງນີ້:

3.1.1. ເອກະສານມອບສິດໃນກໍລະນີມອບອຳນາດໃຫ້ຜູ້ອື່ນ (ພະນັກງານຂອງຕົນ) ຍື່ນຊອງເອກະສານ ຄຸນວຸດທິ ປິດຊອງແໜ້ນສະໜິດພ້ອມປະທັບກາບໍລິເວນປິດຊອງ;

3.1.2. ໜັງສືສຳຄັນຂອງບໍລິສັດພ້ອມຮັບຮອງສຳເນົາຖືກຕ້ອງຂອງຜູ້ມີອຳນາດ ແລະ ປະທັບກາຂອງບໍລິສັດພ້ອມໄດ້ແກ່:

- ສຳເນົາໜັງສືຮັບຮອງຈາກບໍລິສັດ ໄລຍະເວລາບໍ່ເກີນ 3 ເດືອນ;
- ສຳເນົາໜັງສືຮັບຮອງຈຳນວນ ຫຼື ຊື່ຄະນະກຳມະການເຊິ່ງລົງຊື່ຕິດພັນບໍລິສັດໄດ້;
- ໃບທະບຽນວິສາຫະກິດ;
- ໃບທະບຽນອາກອນ 3 ປີຍ້ອນຫຼັງ (2021-2023);
- ໃບອະນຸຍາດດຳເນີນທຸລະກິດປີ 2023 (ໃບຢັ້ງຢືນສືບຕໍ່ດຳເນີນທຸລະກິດ);
- ປະຫວັດການສ້າງຕັ້ງບໍລິສັດ (Company Profile);
- ບັນຊີລາຍຊື່ພະນັກງານຄຸ້ມຄອງວິຊາການຂອງບໍລິສັດ (Company Org Chart);
- ໃບຢັ້ງຢືນຜົນງານ ແລະ ປະສົບການ ໃນການໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ສູນເກັບກຳຂໍ້ມູນ-ຂ່າວສານ ຢູ່ ສປປ ລາວ ໄລຍະ 05 ປີຜ່ານມາ;

3.1.3. ຜູ້ເຂົ້າຮ່ວມຄັດເລືອກຄຸນວຸດທິຕ້ອງຮັບປະກັນວ່າມີໃບຢັ້ງຢືນເປັນຕົວແທນຈຳໜ່າຍ ຈາກຜູ້ຜະລິດ ອຸປະກອນ ແລະ ໄດ້ຮັບອະນຸຍາດຈາກຜູ້ຜະລິດໃນການທີ່ຈະເຂົ້າຮ່ວມໂຄງການນີ້;

3.1.4. ຖ້າຫາກວ່າຜູ້ຜະລິດອຸປະກອນມີຫ້ອງການ ແລະ ສູນບໍລິການ ຢູ່ ສປປ ລາວ ຈະໄດ້ຮັບພິຈາລະນາ ເປັນພິເສດ;

3.1.5. ໂຄງສ້າງບຸກຄະລາກອນຂອງບໍລິສັດ ແລະ ໜ້າທີ່ຂອງບຸກຄະລາກອນພ້ອມສໍາເນົາໃບປະກອບວິຊາອາຊີບ ຕາມອໍານາດຂອບເຂດວິສະວະກໍາ.

3.1.6. ໃບແຈ້ງບໍລິມາດວຽກ (BoQ) ທີ່ບໍ່ມີລາຄາ;

3.1.7. ເອກະສານສະເປັກວັດສະດຸ, ອຸປະກອນທີ່ຈະນໍາໃຊ້ເຂົ້າໃນໂຄງການນີ້ (Material Specification);

3.1.8. ໂຄງຮ່າງການຈັດຕັ້ງບຸກຄະລາກອນຂອງໂຄງການນີ້ (Site Org Chart);

3.1.9. ແຜນແຕ້ມສະແດງສະຖານທີ່ໂຄງການ (Site Preparation/Mobilization);

3.1.10. ແຜນວຽກສໍາລັບໂຄງການນີ້ (Project Schedule);

3.1.11. ເອກະສານສະເໜີແນວທາງ ແລະ ວິທີການດໍາເນີນວຽກ (Method Statement).

**3.2.** **<u>ຊອງທີ 2</u>:** ປະກອບມີລາຍລະອຽດດັ່ງນີ້:

**3.2.1.** ຈົດໝາຍສະເໜີລາຄາເຂົ້າຮ່ວມການປະມູນ (Form to Bid);

**3.2.2.** ໃບແຈ້ງບໍລິມາດວຽກ ແລະ ລາຄາ (BoQ);

**3.2.3.** ແຊັກ/ໜັງສືຄໍ້າປະກັນການປະມູນ (Bid Bond);

**3.2.4.** ໃບຢັ້ງຢືນຖານະການເງິນ ໄລຍະ 3 ປີ ຍ້ອນຫຼັງ (2022-2024) ອອກໃຫ້ໂດຍທະນາຄານ ໃນ ສປປ ລາວ;

**4. ການສະເໜີລາຄາ.**

4.1 ບໍລິສັດເຂົ້າຮ່ວມປະມູນ ຈະຕ້ອງສະເໜີຕາມແບບ ແລະ ບໍລິມາດ ທີ່ກໍານົດໄວ້ໃນເອກະສານການປະມູນລາຄາ ໃຫ້ຖືກຕ້ອງເປັນ ***ສະກຸນເງິນກີບເທົ່ານັ້ນ (ເຈົ້າຂອງໂຄງການຈະບໍ່ພິຈາລະນາຖ້າສະເໜີເປັນສະກຸນເງິນຕາຕ່າງປະເທດ ແລະ ເອກະສານປະມູນຈະຖືເປັນໂມຄະ)*** ພ້ອມລົງລາຍເຊັນຂອງບໍລິສັດເຂົ້າຮ່ວມປະມູນ ຢ່າງຄົບຖ້ວນ;

4.2 ບໍລິສັດເຂົ້າຮ່ວມປະມູນ ຈະຕ້ອງກໍານົດອາຍຸເອກະສານລາຄາບໍ່ໜ້ອຍກວ່າຕາມທີ່ກໍານົດໃນຂໍ້ 7 ນັບແຕ່ວັນຍື່ນສະເໜີລາຄາຕ້ອງຮັບຜິດຊອບລາຄາທີ່ຕົນສະເໜີໄວ້ ແລະ ບໍ່ສາມາດຖອນການສະເໜີລາຄານີ້;

4.3 ບໍລິສັດເຂົ້າຮ່ວມປະມູນ ຈະຕ້ອງສະເໜີກໍານົດເວລາດໍາເນີນການໂຄງການຕາມສັນຍາທີ່ຈະແຈ້ງໃຫ້ແລ້ວບໍ່ເກີນ 12 ເດືອນ (365 ວັນ) ຖັດຈາກມື້ລົງສັນຍາວ່າຈ້າງ ຫຼື ວັນທີ່ໄດ້ຮັບໜັງສືແຈ້ງໃຫ້ດໍາເນີນວຽກ ຈາກເຈົ້າຂອງໂຄງການໃຫ້ເລີ່ມເຮັດວຽກ;

4.4 ກ່ອນຍື່ນເອກະສານປະມູນລາຄາ, ບໍລິສັດເຂົ້າຮ່ວມປະມູນ ຕ້ອງກວດກາເບິ່ງແບບ ແລະ ລາຍລະອຽດອື່ນ ໆ ໃຫ້ຄົບຖ້ວນ ແລະ ເຂົ້າໃຈເອກະສານການປະມູນລາຄາທັງໝົດເສຍກ່ອນ ແລະ ຍອມຮັບວ່າມີຄວາມຖືກຕ້ອງຄົບຖ້ວນແລ້ວ ກ່ອນຈະຕົກລົງຍື່ນຂໍ້ສະເໜີຕາມເງື່ອນໄຂໃນເອກະສານປະມູນລາຄາໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ;

4.5 ເມື່ອຄົບກໍານົດເວລາຍື່ນເອກະສານປະມູນລາຄາແລ້ວຄະນະກໍາມະການປະມູນຈະບໍ່ຮັບເອກະສານເພີ່ມຕື່ມຢ່າງເດັດຂາດ;

4.6 ເຈົ້າຂອງໂຄງການ ຫຼື ຕົວແທນເຈົ້າຂອງໂຄງການຈະດໍາເນີນການກວດສອບຄຸນສົມບັດຂອງບໍລິສັດເຂົ້າຮ່ວມປະມູນ ແຕ່ລະຄົນວ່າເປັນບໍລິສັດເຂົ້າຮ່ວມປະມູນ ທີ່ເອື້ອຜົນປະໂຫຍດຮ່ວມກັນກັບບໍລິສັດເຂົ້າຮ່ວມປະມູນ ອື່ນໃນມື້ປະກວດປະມູນລາຄາ ຫຼື ບໍ່ ພ້ອມທັງກວດສອບຂໍ້ສະເໜີຕາມຂໍ້ 5 ແລະ ແຈ້ງຜູ້

ປະມູນລາຄາແຕ່ລະຄົນຮັບຊາບ ເປັນລາຍລັກອັກສອນ ຢ່າງເປັນທາງການ ເພື່ອເປັນຫຼັກຖານວ່າ ບໍລິສັດເຂົ້າຮ່ວມປະມູນ ໄດ້ຮັບຮູ້ ແລະ ຮັບເອົາຜົນຂອງການປະມູນດັ່ງກ່າວແລ້ວ;

4.7 ເຈົ້າຂອງໂຄງການ ຫຼື ໂຕແທນເຈົ້າຂອງໂຄງການທີ່ເຮັດໜ້າທີ່ຄະນະກຳມະການປະມູນລາຄາຂໍສະຫງວນສິດໃນການຕັດສິນການດຳເນີນການໃດ ໆ ລະຫວ່າງການປະມູນລາຄາ ເພື່ອໃຫ້ການປະມູນລາຄາເກີດຜົນປະໂຫຍດສູງສຸດຕໍ່ເຈົ້າຂອງໂຄງການ;

4.8 ລາຄາທີ່ສະເໜີຈະຕ້ອງເປັນລາຄາທີ່ລວມອາກອນນຳເຂົ້າສິນຄ້າ (ຖ້າມີ);

4.9 ຜູ້ປະມູນລາຄາຈະຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທຳນຽມຊື້ເອກະສານປະມູນລາຄາ ເປັນຈຳນວນເງິນ 30,000,000.00 ກີບ (ສາມສິບລ້ານ ກີບຖ້ວນ) ໂອນເຂົ້າບັນຊີທະນາຄານຂອງເຈົ້າຂອງໂຄງການ ໃນມື້ພົບພັນເອົາເອກະສານການປະມູນລາຄາດັ່ງກ່າວ.

ໂອນເຂົ້າບັນຊີ: 888010LAK23618000010001

ຊື່ບັນຊີ: Admin.external BCEL

ສະກຸນ: LAK – LAO KIP

## 5. ໃບສະແດງລາຍການໜ້າວຽກ (Bill of Quantities).

5.1. ຜູ້ປະມູນລາຄາຈະຕ້ອງບໍ່ປ່ຽນແປງຂໍ້ຄວາມ ຫຼື ອັກສອນໃດ ໆ ໃນໃບສະແດງລາຍການວຽກ ຫາກມີຄວາມປະສົງຈະປ່ຽນແປງໃດ ໆ ຫຼື ເພີ່ມຕື່ມລາຍການອື່ນທີ່ເຫັນວ່າບໍ່ຄອບຄຸມ ແລະ ບໍ່ສາມາດດຳເນີນການໃຫ້ສຳເລັດຕາມສັນຍາໄດ້ ໃຫ້ຈັດພິມຕໍ່ທ້າຍໃນແບບຟອມສະເໜີລາຄາແຕ່ລະໝວດວຽກແທນ;

5.2. ລາຍການໃດທີ່ຜູ້ປະມູນລາຄາບໍ່ໃສ່ມູນຄ່າຈະຕ້ອງຂີດຂ້າ ຫຼື ໃຊ້ເຄື່ອງໝາຍທີ່ເໝາະສົມສະແດງໄວ້ໃນຊ່ອງຈຳນວນເງິນ;

5.3. ລາຄາທີ່ລະບຸຢູ່ໃນໃບສະແດງລາຍການໜ້າວຽກ ຫາກບໍ່ມີການອະທິບາຍເປັນຢ່າງອື່ນໃຫ້ຖືວ່າການຈັດສົ່ງວັດສະດຸນັ້ນລວມທັງການຂົນຍ້າຍ, ການກອງວັດສະດຸ, ການໃຊ້ແຮງງານໃນການປະກອບ, ຕິດຕັ້ງ, ປັບແຕ່ງ, ຈັດການສິ່ງເສດເຫຼືອຂອງວັດສະດຸ, ການໃຊ້ອຸປະກອນເຄື່ອງຈັກ, ການຄວບຄຸມເບິ່ງແຍງວຽກ, ນ້ຳມັນເຊື້ອໄຟ, ພາສີ, ກຳໄລ, ຄ່າທຳນຽມໃນການອອກແບບ, ຄ່າໃຊ້ຈ່າຍອື່ນ ໆ ທຸກສິ່ງທີ່ຈຳເປັນໃນການເຮັດວຽກຕາມລາຍການໃຫ້ສຳເລັດຢ່າງຖືກຕ້ອງ;

5.4. ກ່ອນລົງລາຍເຊັນໃນສັນຍາ ຂໍ້ຜິດພາດໃດ ໆ ທີ່ເກີດຂຶ້ນ ຫຼື ສິ່ງຜົນກະທົບຕໍ່ມູນຄ່າວຽກທີ່ສະເໜີຈະຕ້ອງຄິດໄລ່, ປັບໃຫ້ຖືກຕ້ອງພາຍໃນລາຍການຕ່າງ ໆ ໂດຍຍັງຄົງໄວ້ເຊິ່ງມູນຄ່າການປ່ຽນແປງ ໃນກໍລະນີທີ່ມີການປ່ຽນແປງຂອງສັນຍາ (ຖ້າມີ);

5.5. ຜູ້ປະມູນລາຄາ ຈະຕ້ອງສົ່ງໃບແຈ້ງບໍລິມາດວຽກ ແລະ ລາຄາໂດຍໃຫ້ແນບເປັນ File Excel ມາພ້ອມເພື່ອການກວດສອບເຖິງທີ່ມາຂອງລາຄາ ຈາກຄະນະກຳມະການຢ່າງຖືກຕ້ອງ.

## 6. ວຽກເພີ່ມ - ວຽກຫຼຸດ.

ໃນກໍລະນີທີ່ມີວຽກເພີ່ມ-ວຽກຫຼຸດເກີດຂຶ້ນ ຈະອີງຕາມຫົວໜ່ວຍລາຄາວັດສະດຸ ແລະ ຄ່າແຮງງານໃນໃບສະເໜີລາຄາເພື່ອເປັນມູນຄ່າອ້າງອີງໃນການຄິດໄລ່ ແລະ ອັດຕາສ່ວນ ບໍລິຫານ ແລະ ກຳໄລ (Overhead & Profit) ຕາມເງື່ອນໄຂທີ່ໄດ້ກຳນົດໃນໃບສະເໜີລາຄາ ແລະ ຂໍສະຫງວນສິດໃນການພິຈາລະນາວຽກເພີ່ມ-ວຽກຫຼຸດ ເປັນແຕ່ລະກໍລະນີ.

## 7. ໄລຍະເວລາການຍື່ນລາຄາ.

ເອກະສານການຍື່ນລາຄາວຽກງານການໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ອາຄານ ຕ້ອງມີອາຍຸນຳໃຊ້ໄດ້ 90 ວັນ ຫຼັງຈາກການຍື່ນຊອງປະມູນລາຄາ.

**8. ເງື່ອນໄຂການລົງທຶນ.**

8.1. ໂຄງການໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ອາຄານ ເປັນການລົງທຶນຂອງຜູ້ຊະນະການປະມູນຮ້ອຍສ່ວນຮ້ອຍ, ດັ່ງນັ້ນຈຶ່ງບໍ່ມີການຈ່າຍເງິນລ່ວງໜ້າຈາກເຈົ້າຂອງໂຄງການ;

8.2. ໄລຍະການລົງທຶນຂອງໂຄງການເປັນເວລາ 3, 5 ຫຼື 10 ປີ ຜູ້ເຂົ້າຮ່ວມການປະມູນສາມາດເຮັດແຜນການລົງທຶນເພື່ອໃຫ້ເຈົ້າຂອງໂຄງການໄດ້ພິຈາລະນາ;

8.3. ບໍລິສັດເຂົ້າຮ່ວມປະມູນ ທີ່ຊະນະການປະມູນຕ້ອງມີສັກກາຍະພາບທາງດ້ານການເງິນພຽງພໍ ຫຼື ສາມາດເຂົ້າເຖິງແຫຼ່ງທຶນ ເພື່ອຮອງຮັບການດຳເນີນໂຄງການຈົນສຳເລັດ;

8.4. ຖ້າບໍລິສັດເຂົ້າຮ່ວມປະມູນ ທີ່ຊະນະການປະມູນ ຫາກມີຄວາມສົນໃຈແຫຼ່ງທຶນເງິນກູ້ ສາມາດພົວພັນ ຫຼື ປຶກສານຳ ທຄຕລ ໄດ້.

**9. ການຍອມຮັບ ຫຼື ການຍົກເລີກການປະມູນລາຄາ.**

ເຈົ້າຂອງໂຄງການມີສິດທີ່ຈະປະຕິເສດບໍລິສັດເຂົ້າຮ່ວມປະມູນ ລາຄາລາຍການໃດໜຶ່ງ ຫຼື ຫຼາຍລາຍການ ມີສິດທີ່ຈະຍົກເລີກການປະມູນລາຄາທັງໝົດ ເພື່ອປະໂຫຍດຂອງເຈົ້າຂອງໂຄງການ ບໍລິສັດເຂົ້າຮ່ວມປະມູນ ຈະບໍ່ຮຽກຮ້ອງຄ່າເສຍຫາຍຈາກເຈົ້າຂອງໂຄງການ ບໍລິສັດເຂົ້າຮ່ວມປະມູນ ທີ່ສະເໜີລາຄາທີ່ຕ່ຳສຸດອາດຈະບໍ່ໄດ້ຮັບການພິຈາລະນາໃຫ້ເປັນບໍລິສັດຊະນະການປະມູນ ທັງນີ້ຂຶ້ນຢູ່ກັບຄຸນນະພາບ ແລະ ປະສົບການ ແລະ ອົງປະກອບອື່ນ ໆ ທີ່ໄດ້ກຳນົດໃນເອກະສານປະມູນລາຄາເພື່ອໃຫ້ເຈົ້າຂອງໂຄງການໄດ້ຮັບຜົນປະໂຫຍດຫຼາຍທີ່ສຸດ.

**10. ເອກະສານເພີ່ມຕື່ມ.**

ເຈົ້າຂອງໂຄງການ ຫຼື ຕົວແທນເຈົ້າຂອງໂຄງການຈະອອກເອກະສານເພີ່ມຕື່ມເພື່ອຊີ້ແຈງ ຫຼື ແກ້ໄຂເອກະສານປະມູນລາຄາບາງສ່ວນ ຫຼື ທັງໝົດໂດຍເອກະສານເພີ່ມຕື່ມທຸກ ໆ ສະບັບຈະຖືກຈັດສົ່ງໃຫ້ຜູ້ຮ່ວມປະມູນລາຄາທຸກ ໆ ລາຍ ແລະ ຈະຖືວ່າເອກະສານດັ່ງກ່າວເປັນສ່ວນໜຶ່ງຂອງເອກະສານປະມູນລາຄາໃນຄັ້ງນີ້.

**11. ການຄ້ຳປະກັນການຍື່ນຊອງປະມູນ (Bid Bond).**

ຜູ້ສະເໜີລາຄາຕ້ອງວາງຫຼັກຄ້ຳປະກັນການປະມູນລາຄາ (Bid Bond) ໃນວັນທີ່ສົ່ງເອກະສານປະມູນລາຄາເພື່ອເປັນເອກະສານຄ້ຳປະກັນສະເໜີລາຄາຈຳນວນ 10% ຂອງມູນຄ່າໂຄງການ ໂດຍຫຼັກຄ້ຳປະກັນຊອງຈະຕ້ອງມີໄລຍະເວລາການຄ້ຳປະກັນຕັ້ງແຕ່ມື້ຍື່ນຊອງສະເໜີລາຄາໄປຈົນເຖິງມື້ສິ້ນສຸດການສະເໜີລາຄາ 90 ວັນ ໂດຍຫຼັກຄ້ຳປະກັນໃຫ້ໃຊ້ຢ່າງໃດຢ່າງໜຶ່ງຕໍ່ໄປນີ້:

11.1. ແຊັກເງິນສົດ (ຕ້ອງເປັນແຊກທີ່ວິຊາແລ້ວ);

11.2. ໜັງສືຄ້ຳປະກັນຂອງທະນາຄານ (Bank Guarantee) ຂອງທະນາຄານທີ່ດຳເນີນທຸລະກິດໃນ ສປປ ລາວ;

ຫຼັກຄ້ຳປະກັນຊອງຕາມຂໍ້ນີ້ ໃນກໍລະນີທີ່ບໍລິສັດເຂົ້າຮ່ວມປະມູນ ທີ່ສະເໜີລາຄາບໍ່ໄດ້ຮັບການຄັດເລືອກໃຫ້ເປັນຜູ້ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ, ເຈົ້າຂອງໂຄງການຈະຄືນໃຫ້ຜູ້ສະເໜີລາຄາ ຫຼື ຜູ້ຄ້ຳປະກັນພາຍຫຼັງທີ່ໄດ້ຄັດເລືອກບໍລິສັດເຂົ້າຮ່ວມປະມູນໃດໜຶ່ງ ໃຫ້ເປັນຜູ້ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ຫຼື ເມື່ອຜູ້ສະເໜີລາຄາໄດ້ພົ້ນຈາກຂໍ້ຜູກພັນແລ້ວ.

ໃນກໍລະນີບໍລິສັດເຂົ້າຮ່ວມປະມູນ ໄດ້ຮັບການຄັດເລືອກໃຫ້ເປັນຜູ້ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ເຈົ້າຂອງໂຄງການຈະຄືນໜັງສືຄໍ້າປະກັນພາຍຫຼັງ ທີ່ຜູ້ໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ໄດ້ເຊັນສັນຍາ ແລະ ໄດ້ສົ່ງມອບໜັງສືຄໍ້າປະກັນການປະຕິບັດຕາມສັນຍາ ໃຫ້ເຈົ້າຂອງໂຄງການຮຽບຮ້ອຍແລ້ວ ການຄືນຫຼັກປະກັນການປະມູນ ບໍ່ວ່າໃນກໍລະນີໃດ ໆ ຈະຄືນໃຫ້ ໂດຍບໍ່ມີດອກເບ້ຍ;

ໃນກໍລະນີຜູ້ທີ່ຊະນະການປະມູນ ປະຕິເສດ ຫຼື ເລື່ອນການເຊັນສັນຍາໂຄງການຕາມເວລາທີ່ກໍານົດໃຫ້ຂ້າງເທິງ, ໂດຍບໍ່ມີເຫດຜົນພຽງພໍ. ເຈົ້າຂອງໂຄງການຈະບໍ່ຄືນເງິນຄໍ້າປະກັນການປະມູນ (ຖືວ່າເປັນໂມຄະ).

## 12. ການປະເມີນຜົນການປະມູນ.

ການປະເມີນຜົນຂອງການປະມູນ ເປັນການປະເມີນຄວາມສໍາຄັນແຕ່ລະຂໍ້ກໍານົດທີ່ມີໃນໜ້າວຽກໂຄງການ ທີ່ໄດ້ກໍານົດ ບັນດາຂໍ້ກໍານົດໜ້າວຽກຫຼັກ ແລະ ໜ້າວຽກຍ່ອຍອື່ນໆ ທີ່ສໍາຄັນເພື່ອປະເມີນເຖິງບັນດາເງື່ອນໄຂຕ່າງໆ ທີ່ຜູ້ເຂົ້າຮ່ວມປະມູນສະເໜີມາ ເຊິ່ງສາມາດແບ່ງການປະເມີນຕາມເອກະສານທີ່ຕ້ອງການດັ່ງນີ້:

| ລ/ດ | ລາຍການ | ຄະແນນ | ໝາຍເຫດ |
|---|---|---|---|
| 1 | ເອກະສານດ້ານຄຸນວຸດທິ ແລະ ເອກະສານມາດຖານດ້ານເຕັກນິກ | 70 | |
| 2 | ເອກະສານດ້ານການເງິນ | 30 | |

ຄະແນນຂອງແຕ່ລະໜ້າວຽກຂ້າງເທິງແມ່ນຈະແຍກເປັນລາຍລະອຽດຂໍ້ຍ່ອຍ ໃນເອກະສານປະເມີນຄະແນນຂອງ ຜູ້ເຂົ້າຮ່ວມການປະມູນຂອງຄະນະກໍາມະການຢ່າງລະອຽດຕື່ມ.

## 13. ການເປີດຊອງເອກະສານປະມູນ.

ການເປີດຊອງເອກະສານປະມູນແມ່ນຈະໄດ້ເປີດຊ່ອງໜ້າ ຄະນະກໍາມະການປະມູນ ແລະ ຜູ້ປະມູນ ຫຼື ຜູ້ຖືກມອບສິດໃນເວລາ ແລະ ສະຖານທີ່ໄວ້ໃນໜັງສືແຈ້ງເຊີນ ເຊິ່ງການເປີດຊອງນັ້ນແມ່ນໄດ້ອີງໃສ່ໜັງສືຄໍາແນະນໍາກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ: 0477/ກງ ລົງວັນທີ 13 ກຸມພາ 2019 ຂໍ້ທີ 4.1.8. ແມ່ນຈະໄດ້ມີການເປີດແຕ່ຊອງເອກະສານທາງດ້ານຄຸນວຸດທິ ແລະ ມາດຕະຖານເຕັກນິກ, ສ່ວນຊອງສະເໜີລາຄາແມ່ນໃຫ້ຮັກສາໄວ້ ແລະ ບໍ່ໃຫ້ເປີດຈົນກວ່າຈະສໍາເລັດການປະເມີນທາງຄຸນວຸດທິໂດຍຄະນະກໍາມະການ, ຜູ້ທີ່ຢູ່ໃນບັນຊີຄັດຈ້ອນ ຈຶ່ງຈະຖືກເຊີນມາຮ່ວມເປີດຊອງສະເໜີລາຄາ. ຊອງສະເໜີລາຄາຂອງຜູ້ບໍ່ຢູ່ໃນບັນຊີຄັດຈ້ອນຈະບໍ່ຖືກເປີດ ແລະ ຖືກສົ່ງຄືນເຈົ້າຂອງທີ່ບໍ່ຢູ່ໃນບັນຊີຄັດຈ້ອນດັ່ງກ່າວ ຫຼັງຈາກສັນຍາດັ່ງກ່າວຖືກເຊັນແລ້ວ.

## 14. ການອະນຸມັດສັນຍາ.

14.1. ບັນທັດຖານຂອງການອະນຸມັດສັນຍາ.

ເຈົ້າຂອງໂຄງການຈະເຊັນສັນຍາມອບວຽກໃຫ້ບໍລິການ ກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ນີ້ໃຫ້ແກ່ບໍລິສັດຜູ້ເຂົ້າປະມູນ ທີ່ສະເໜີລາຄາທີ່ສົມເຫດສົມຜົນ ແລະ ຕອບສະໜອງໄດ້ທຸກເງື່ອນໄຂຂອງການປະມູນ.

14.2. ແຈ້ງການອະນຸມັດສັນຍາ.

ເຈົ້າຂອງໂຄງການຈະແຈ້ງການໃຫ້ຜູ້ຊະນະການປະມູນ ໄດ້ຮັບຊາບແບບລາຍລັກອັກສອນ.

14.3. ການເຊັນສັນຍາຕົກລົງ.

ພາຍໃນ 05 ລັດຖະການ ຫຼັງຈາກທີ່ເຈົ້າຂອງໂຄງການອອກໜັງສືຮັບຮອງເອົາຜູ້ຊະນະການປະມູນ ຈະຕ້ອງມາເຊັນສັນຍາກັບ ທຄຕລ (ລາຍລະອຽດ ແລະ ເນື້ອໃນ ຂອງສັນຍາແມ່ນຈະຖືກຕິ່ມໃສ່ແບບຟອມ ທີ່ຄັດຕິດກັບເອກະສານປະມູນນີ້).

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໜອນ ຈັນທະຈັກ